Empowered lives.
Resilient nations.

# <u>ບົດອອກຂ່າວ</u>

## ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11

**‘‘ເລັ່ງລັດການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ**
**ແລະ ການພັດທະນາແບບສົມສ່ວນທີ່ມີສ່ວນຮ່ວມ”**
**ຄັ້ງວັນທີ 19 ພະຈິກ 2013, ທີ່ ຫໍປະຊຸມແຫ່ງຊາດ**
**ນະຄອນຫຼວງວຽງຈັນ, ສປປ ລາວ**

ຈັດໂດຍ

ກະຊວງແຜນການ ແລະ ການລົງທຶນ ແລະ ອົງການ ສະຫະປະຊາຊາດ ເພື່ອການພັດທະນາ

ກອງປະຊຸມໂຕະມົນລະດັບສູງ ຄັ້ງທີ່ 11 ພາຍໃຕ້ຫົວຂໍ້: ‘‘ເລັ່ງລັດການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ການພັດທະນາແບບສົມສ່ວນທີ່ມີສ່ວນຮ່ວມ’’ ໄດ້ໄຂຂຶ້ນຢ່າງເປັນທາງການ ໃນວັນທີ 19 ພະຈິກ 2013, ທີ່ ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ໂດຍໃຫ້ກຽດກ່າວໄຂກອງປະຊຸມໂດຍ ພະນະທ່ານ ທອງສິງ ທຳມະວົງ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ແລະ ກ່າວມີຄຳເຫັນຕໍ່ກອງປະຊຸມໂດຍ ທ່ານ ຮາວລຽງ ຊູ, ເຊິ່ງກ່າວໃນນາມ ທ່ານ ນາງ ເຮເລັນ ຄຼາກ, ຜູ້ອຳນວຍການໃຫຍ່ອົງການສະຫະປະຊາຊາດ ເພື່ອການພັດທະນາ. ກອງປະຊຸມເປັນປະທານໂດຍ ທ່ານ ດຣ. ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ ແລະ ປະທານຮ່ວມໂດຍ ທ່ານ ຮາວລຽງ ຊູ, ຜູ້ຊ່ວຍເລຂາທິການໃຫຍ່ອົງການສະຫະປະຊາຊາດ, ຜູ້ຊ່ວຍຜູ້ອຳນວຍການໃຫຍ່ ອົງການສະຫະປະຊາຊາດ ເພື່ອການພັດທະນາ ທັງເປັນເອກອະທິບໍດີ ອົງການສະຫະປະຊາຊາດ ເພື່ອການພັດທະນາ ສຳລັບ ຂົງເຂດພາກພື້ນອາຊີ-ປາຊີຟິກ, ເຊິ່ງມີບັນດາຜູ້ແທນ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມທັງໝົດຫຼາຍກ່ວາ 400 ທ່ານ (ໃນນັ້ນປະກອບມີ ຄະນະຜູ້ແທນຝ່າຍລາວ **38** ຄະນະ ເຊິ່ງມາຈາກສູນກາງ 21 ພາກສ່ວນ ແລະ ທ້ອງຖິ່ນ 17 ແຂວງ; ຄະນະຜູ້ແທນຝ່າຍຕ່າງປະເທດທັງໝົດ **118** ຄະນະ ເຊິ່ງລວມມີ 39 ສະຖານທູດ, 37 ກະຊວງການຕ່າງ ປະເທດ, 42 ອົງການ; **6** ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ; **4** ພາກເອກະຊົນ ແລະ **5** ອົງການບໍ່ຫວັງຜົນ ກຳໄລ).

ຈຸດປະສົງ ຂອງກອງປະຊຸມໂຕະມົນລະດັບສູງໃນຄັ້ງນີ້ ແມ່ນເພື່ອແຈ້ງສະພາບການພັດທະນາຂອງ ສປປ ລາວ ໃຫ້ບັນດາຄູ່ຮ່ວມພັດທະນາໄດ້ຮັບຊາບ ແລະ ໄດ້ນຳສະເໜີຫົວຂໍ້ຕ່າງໆ ເພື່ອໃຫ້ກອງປະຊຸມໄດ້ປຶກສາຫາລື ເຊັ່ນ: (1) ຜົນຂອງການທົບທວນກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ່ VII - ຄວາມຄືບໜ້າໃນການຈັດຕັ້ງປະຕິບັດ ແລະ ທິດທາງໃນຕໍ່ໜ້າ; (2) ຄວາມຄືບໜ້າ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ທິດທາງໃນຕໍ່ໜ້າເພື່ອບັນລຸເປົ້າໝາຍທີ່ຍັງປະຕິບັດບໍ່ໄດ້ຕາມຄາດໝາຍ; (3) ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານການປົກຄອງ: ການມີສ່ວນຮ່ວມຂອງປະຊາຊົນ, ການປົກຄອງດ້ວຍກົດໝາຍ ແລະ ການປັບປຸງການບໍລິການຂອງພາກລັດ; (4) ຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານການເງິນ ແລະ ບາດກ້າວສຳຄັນ ຂອງຂະແໜງການດັ່ງກ່າວ ເພື່ອບັນລຸແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII; (5) ການສ້າງຄວາມເຂັ້ມແຂງຂອງການເປັນຄູ່ຮ່ວມ ເພື່ອຍົກສູງປະສິດທິຜົນຂອງການພັດທະນາ; (6) ທິດທາງ

ຍຸດທະສາດ ເພື່ອເລັ່ງລັດການບັນລຸແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ່ VII ລວມທັງເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ທິດທາງສໍາລັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ VIII.

ໃນພາກກ່າວເປີດກອງປະຊຸມ, ພະນະທ່ານ ທອງສິງ ທໍາມະວົງ ໄດ້ຍົກໃຫ້ເຫັນ: ຜົນສໍາເລັດໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ່ 7 (2011-2015) ໄລຍະກາງສະໄໝ ເຊັ່ນ: ສາມາດຮັບປະກັນໄດ້ສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ເສດຖະກິດຂອງລາວ ໄດ້ມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ, ລວມຍອດຜະລິດຕະພັນພາຍໃນ (GDP) ເພີ່ມຂຶ້ນສະເລ່ຍ 3 ປີ ບັນລຸ 8,2%, ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ, ອັດຕາຄວາມທຸກຍາກໄດ້ຫຼຸດລົງຈາກ 27,6% ໃນສົກປີ 2007-2008 ມາເປັນ 20,5% ໃນສົກປີ 2012-2013; ການທົດລອງຈັດຕັ້ງປະຕິບັດວຽກງານ 3 ສ້າງ; ແລະ ຄວາມຄືບໜ້າການບັນລຸເປົ້າໝາຍ MDGs ຈໍານວນໜຶ່ງ. ພ້ອມນີ້ທ່ານ ກໍ່ໄດ້ຍົກໃຫ້ເຫັນສະພາບຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆ ເຊັ່ນ: ຜົນກະທົບຈາກໄພພິບັດທາງທໍາມະຊາດ; ບັນຫາການຂາດດຸນລາຍຮັບ-ລາຍຈ່າຍງົບປະມານ ສົກປີ 2012-2013; ເປົ້າໝາຍສະຫັດສະຫວັດດ້ານການພັດທະນາທີ່ຍັງປະຕິບັດບໍ່ທັນໄດ້ຕາມຄາດໝາຍ; ຂໍ້ຈໍາກັດດ້ານຄວາມຮູ້ຄວາມສາມາດຂອງພະນັກງານ-ລັດຖະກອນ ແລະ ການປະຕິບັດບັນດານິຕິກໍາຕ່າງໆ ຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ. ຈາກບັນຫາຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຕ່າງໆນັ້ນ ທ່ານໄດ້ໃຫ້ທິດຊີ້ນໍາໂດຍໃຫ້ສຸມໃສ່ ຈັດຕັ້ງປະຕິບັດແຜນການໃນຕໍ່ໜ້າ ເຊັ່ນ: ມາດຕະການເພື່ອຊຸກຍູ້ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍສະເພາະ ການຮັບປະກັນຄວາມໝັ້ນທ່ຽງຂອງເສດຖະກິດມະຫາພາກ; ເອົາໃຈໃສ່ຊຸກຍູ້ການເກັບລາຍຮັບໃຫ້ແຂງແຮງ ດ້ວຍການປັບປຸງລະບົບກົນໄກການຈັດເກັບລາຍຮັບຈາກແຫຼ່ງໃໝ່ໃຫ້ເພີ່ມຂຶ້ນ ເພື່ອທົດແທນງົບປະມານທີ່ຈະຂາດດຸນ ແລະ ຮັກສາອັດຕາການຂາດດຸນງົບປະມານ ໃຫ້ຢູ່ໃນລະດັບທີ່ເໝາະສົມ; ເພີ່ມທະວີເອົາໃຈໃສ່ຕ້ານທຸກປະກົດການຫຍໍ້ທໍ້ໃນສັງຄົມ, ສ້າງສັງຄົມທີ່ປອດໃສຂາວສະອາດ, ສີວິໄລ ແລະ ຍຸຕິທໍາ; ເອົາໃຈໃສ່ຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລະບຽບກົດໝາຍຢ່າງເຂັ້ມງວດ; ດ້ານການແກ້ໄຂຄວາມທຸກຍາກ ໃຫ້ສຸມກໍາລັງເຂົ້າໃສ່ເພື່ອໃຫ້ປະຊາຊົນ ມີວຽກເຮັດງານທໍາ, ມີອາຊີບທີ່ໝັ້ນຄົງ, ດໍາເນີນການຜະລິດຢ່າງກ້ວາງຂວາງ ແລະ ສ້າງເງື່ອນໄຂໃຫ້ຊົນນະບົດໄດ້ຮັບການພັດທະນາ ແນໃສ່ຫຼຸດຜ່ອນຄວາມແຕກໂຕນດ້ານການພັດທະນາ ແລະ ລະດັບຊີວິດການເປັນຢູ່ ລະຫວ່າງ ຕົວເມືອງ ແລະ ຊົນນະບົດ ໃຫ້ຫຼຸດລົງເທື່ອລະກ້າວ; ເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດ ໃຫ້ຕອບສະໜອງກັບການພັດທະນາເສດຖະກິດ-ສັງຄົມ, ກັບການເຊື່ອມໂຍງພາກພື້ນ ແລະ ສາກົນ; ສືບຕໍ່ຊອກຫາວິທີທາງ ແລະ ມາດຕະການເພື່ອປ້ອງກັນ ແລະ ແກ້ໄຂບັນຫາຜົນກະທົບຈາກໄພພິບັດທາງທໍາມະຊາດ ແລະປົກປັກຮັກສາສິ່ງແວດລ້ອມໃຫ້ຍືນຍົງ.

ໃນໂອກາດດັ່ງກ່າວ, ທ່ານ ນາຍົກລັດຖະມົນຕີ ກໍໄດ້ກ່າວຂອບໃຈ ບັນດາປະເທດເພື່ອນມິດ, ອົງການຈັດຕັ້ງສາກົນ ກໍ່ຄືຄູ່ຮ່ວມພັດທະນາຕ່າງໆ ທີ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອດ້ານທຶນຮອນ ກໍ່ຄືດ້ານວິຊາການ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະທີ່ຜ່ານມາ ລວມທັງ ການບັນລຸເປົ້າໝາຍສະຫັດສະຫວັດ (MDGs) ແລະ ຫວັງວ່າຈະໄດ້ຮັບການສະໜັບສະໜູນໃນໄລຍະຕໍ່ໄປ.

ສໍາລັບຄໍາເຫັນຂອງ ທ່ານ ນາງ ເຮເລັນ ຄຼາກ, ທ່ານ ໄດ້ຢໍ້າເຖິງການເອົາໃຈໃສ່ຈັດຕັ້ງປະຕິບັດເປົ້າໝາຍ MDGs ທີ່ຍັງບໍ່ທັນບັນລຸໄດ້ ແລະ ການເອົາໃຈໃສ່ຕໍ່ກັບຜູ້ທີ່ດ້ອຍໂອກາດ ເຊິ່ງລວມທັງຜູ້ທີ່ຢູ່ຊົນນະບົດ ແລະ ບໍ່ມີໂອກາດເຂົ້າຫາການບໍລິການ ເປັນຕົ້ນແມ່ນ ກຸ່ມຊົນເຜົ່າ, ແມ່ຍິງ, ເດັກນ້ອຍ ແລະ ກຸ່ມຜູ້ທີ່ໄດ້ຮັບຜົນກະທົບຈາກລະເບີດ

ບໍ່ທັນແຕກ. ພ້ອມນັ້ນ, ທ່ານກໍ່ໄດ້ສະແດງຄວາມຍິນດີ ຕໍ່ກັບຄວາມເອົາໃຈໃສ່ຂອງລັດຖະບານ ເພື່ອເຮັດໃຫ້ວຽກງານການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ບັນລຸຕາມຄາດໝາຍ. ທ່ານ ນາງ ເຣເລັນ ຄູາກ ໄດ້ເວົ້າອີກວ່າ ປະເດັນພື້ນຖານແມ່ນ ''ເຮັດໃຫ້ມີການເຊື່ອມໂຍງ ລະຫວ່າງ ການຫຼຸດຜ່ອນຄວາມທຸກຍາກ ແລະ ການສົ່ງເສີມການພັດທະນາທີ່ຍືນຍົງ'' ແລະ ເຖິງວ່າໄດ້ມີການທົບທວນກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 7 ແລ້ວກໍ່ຕາມ, ແຕ່ ''ເຫັນວ່າຍັງເປັນສິ່ງທ້າທາຍຢູ່ ຖ້າຈະເຮັດໃຫ້ການພັດທະນາດ້ານສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ໄປຄຽງຄູ່ກັນ''. ທ່ານ ໄດ້ສະແດງຄວາມເປັນຫ່ວງຕໍ່ການຂາດດຸນງົບປະມານຂອງລັດຖະບານ ເຊິ່ງມັນອາດສົ່ງຜົນກະທົບໃນການບັນລຸເປົ້າໝາຍສະຫັດສະຫວັດ (MDGs) ຂອງ ສປປ ລາວ, ສະນັ້ນ ໄດ້ສະເໜີໃຫ້ ລັດຖະບານ ສຸມທຸກກຳລັງເພື່ອຈຳກັດບັນຫາດັ່ງກ່າວ ໂດຍການຄຸ້ມຄອງລາຍຈ່າຍ ກໍ່ຄືການຊອກວິທີທາງເພື່ອເພີ່ມລາຍຮັບ ໃຫ້ຫຼາຍຂຶ້ນ. ນອກຈາກນັ້ນ, ທ່ານ ນາງ ເຣເລັນ ຄູາກ ຍັງໄດ້ຍົກຄວາມສຳຄັນໃນການສົ່ງເສີມການປົກຄອງທີ່ດີ, ການປະຕິບັດລະບຽບກົດໝາຍ ແລະ ຄວາມໂປ່ງໃສ ແລະ ຄວາມຮັບຜິດຊອບຮ່ວມກັນຂອງທຸກໆຂັ້ນ. ທ່ານເຊື່ອໝັ້ນວ່າ ແນວທາງປະຕິບັດ ''4 ບຸກທະລຸ'' ຂອງລັດຖະບານ ແມ່ນຈະໄດ້ຮັບຜົນດີ.

ກອງປະຊຸມໄດ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນ ເຊິ່ງສະແດງອອກໃນການສົນທະນາຢ່າງສ້າງສັນກົງໄປກົງມາ ແລະ ບັນດາຄູ່ຮ່ວມພັດທະນາ ກໍ່ໄດ້ປະກອບຄຳຄິດຄຳເຫັນຕໍ່ຜົນການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ກໍ່ຄືແຜນການໃນຕໍ່ໜ້າ ແລະ ຍ້ອງຍໍຊົມເຊີຍຄວາມເອົາໃຈໃສ່ ແລະ ບາກບັ່ນພະຍາຍາມຂອງລັດຖະບານ ໃນການຈັດຕັ້ງປະຕິບັດບັນດາບູລິມະສິດຕ່າງໆ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII ແລະ ເປົ້າໝາຍສະຫັດສະຫວັດດ້ານການພັດທະນາ. ນອກນີ້, ບັນດາຄູ່ຮ່ວມພັດທະນາ ຕ່າງກໍ່ມີຄວາມພໍໃຈ ແລະ ຢືນຢັນສືບຕໍ່ໃຫ້ການສະໜັບສະໜູນທາງດ້ານທຶນຮອນ ກໍ່ຄືດ້ານວິຊາການ ໃຫ້ແກ່ ສປປ ລາວ ໃນອະນາຄົດຕື່ມ.

ຜົນສຳເລັດຂອງກອງປະຊຸມໂຕະມົນລະດັບສູງ ຄັ້ງທີ 11 ປະຈຳປີ 2013 ຄັ້ງນີ້, ຖືໄດ້ວ່າ ແມ່ນຜົນສຳເລັດທີ່ສຳຄັນອັນໜຶ່ງ ຈາກການສຸມທຸກເຫື່ອແຮງ ສະຕິປັນຍາ ແລະ ປະກອບສ່ວນຂອງທຸກພາກສ່ວນ ໂດຍສະເພາະ ບັນດາກະຊວງຂະແໜງການ (ໜ່ວຍງານ SWGs) ແລະ ການສະໜັບສະໜູນຂອງຄູ່ຮ່ວມພັດທະນາ ກໍ່ຄື ອົງການ ສປຊ ເພື່ອການພັດທະນາ ປະຈຳ ສປປ ລາວ.

ພາຍຫຼັງສຳເລັດກອງປະຊຸມ, ກະຊວງແຜນການ ແລະ ການລົງທຶນ ໃນນາມທີ່ເປັນຜູ້ປະສານງານສຳລັບການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ຈະໄດ້ນຳພາ ຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມ ໄປຢ້ຽມຢາມໂຄງການ ODA ທີ່ຕິດພັນກັບການຈັດຕັ້ງປະຕິບັດເປົ້າໝາຍ MDGs ຢູ່ທີ່ແຂວງຫຼວງພະບາງ ໃນວັນທີ 20-21 ພະຈິກ 2013 ເຊັ່ນ: ຂະແໜງສຶກສາ ແລະ ສາທາ (ກິດຈະກຳ ຂ້າພະຍາດແມ່ທ້ອງ ສຳລັບເດັກນ້ອຍນັກຮຽນ ອາຍຸ 6-10 ປີ ຢູ່ໂຮງຮຽນປະຖົມສົມບູນ, ເມືອງຊຽງເງິນ); ຂະແໜງກະສິກຳ (ໂຄງການປັບປຸງຊີວິດການເປັນຢູ່ຂອງຊາວກະສິກອນ ຢູ່ເຂດພາກເໜືອ) ແລະ ໂຄງການເກັບກູ້ລະເບີດທີ່ຍັງບໍ່ທັນແຕກ ຢູ່ເມືອງ ປາກອູ.

-------------------------------